ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 448 /ທຄຕລ 2021.......
ນະຄອນຫຼວງວຽງຈັນ, ວັນທີ: ......13 DEC 2021........

## ແຈ້ງເຊີນປະມູນ

**ເຖິງ:** ບັນດາ ບໍລິສັດ ຕິດຕັ້ງສ້ອມແປງ ແລະ ຈຳໜ່າຍອຸປະກອນໄອທີ ໃນ ສປປ ລາວ.
**ເລື່ອງ:** ແຈ້ງເຊີນປະມູນລາຄາ UPS10Kva ໝໍ້ເກັບໄຟຟ້າສຳຮອງ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາທ່ານ ເພື່ອເຂົ້າຮ່ວມປະມູນລາຄາ UPS10Kva ໝໍ້ເກັບໄຟຟ້າສຳຮອງ ໂດຍມີລາຍລະອຽດ ດັ່ງລຸ່ມນີ້:

| Item | Product Number | Description | QTY |
|---|---|---|---|
| 1 | SRV10KIL | APC Easy UPS SRV 10000VA 230V with External Battery Pack | 1 Set |
| 2 | SRV240BP-9A | APC Easy UPS SRV 240V Battery Pack for | 3 Set |
| 3 | | Replacement and testing | 1 Job |

**# ລາຍລະອຽດໜ້າວຽກມີດັ່ງນີ້:**

- ຜູ້ຂາຍຕ້ອງຮັບປະກັນອຸປະກອນຢ່າງໜ້ອຍ 12 ເດືອນ ນັບແຕ່ມື້ເປີດນຳໃຊ້ UPS.
- ບໍລິສັດຜູ້ຂາຍ ຕ້ອງມີຄວາມສຳນານໃນການຕິດຕັ້ງ, ເຊັດຄ່າ ແລະ ອັບເດດໂປແກຼມ ໃຫ້ຕິດຕາມໂຫຼດໄດ້ເປັນປົກກະຕິ.

▪ ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນ ມີຄວາມຕ້ອງການຢື່ນຊອງປະມູນຕ້ອງປະກອບເອກະສານດັ່ງນີ້:

❖ **ເອກະສານຊອງທີ່ 1 ( ບໍ່ປິດຊອງ)**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງໄອທີ ແລະ ເຄື່ອງໄຟຟ້າ, ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ (ຖ້າມີ), ຕ້ອງມີວິຊາການສະເພາະ ແລະ ດຳເນີນທຸລະກິດຢ່າງໜ້ອຍ 03 ປີຂຶ້ນໄປ ແລະ ໃຫ້ສຳເນົາໃບທະບຽນທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີລ່າສຸດ (ປີ 2020).
2. ລະບຸຍີ່ຫໍ້, ປີຜະລິດສິນຄ້າ ຫຼື ມີເອກະສານກ່ຽວຂ້ອງ, ລະບຸໄລຍະເວລາໃນການຮັບປະກັນ, ຜົນງານຜ່ານມາທີ່ເຄີຍສະໜອງ ໃຫ້ພາກສ່ວນອື່ນ.
3. ກຳນົດຢື່ນຊອງມາດຕະຖານເຕັກນິກ ກ່ອນວັນສຸກ, **ວັນທີ 17/12/2021** ເວລາ 11:00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່, ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ຕຶກ **C.**

❖ **ເອກະສານຊອງທີ 2 (ປິດຊອງ)**

1. ໃບສະເໜີລາຄາໃຫ້ລະບຸເປັນສະກຸນເງິນກີບ, ລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມອາກອນມູນຄ່າເພີ່ມໃຫ້ຄົບຖ້ວນ.

2. ວັນພະຫັດ ວັນທີ **23/12/2021** ເວລາ: 9:30ໂມງ ແມ່ນມື້ເປີດຊອງປະມູນ, ສະນັ້ນໃຫ້ບໍລິສັດ, ຮ້ານຕົວແທນຈຳໜ່າຍຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕ່າງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມ ຊັ້ນ 3 ຕຶກ C.
3. ບໍລິສັດຜູ້ສະໜອງຕ້ອງກຳນົດລຸ້ນຕ່າງໆ ພ້ອມທັງລະບຸເງື່ອນໄຂ ມາໃຫ້ຄົບຖ້ວນ ແລະ ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນັ້ນ.
4. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍອອກໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນປະເທດລາວ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງວັນທີ 23/01/2022)** ຫຼື ແຊັກວີຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫລັງປະກາດຜົນ ແລະ ດຳເນີນສັນຍາສຳເລັດ ທຄຕລ ຈະສົ່ງຄືນໜັງສືຄ້ຳປະກັນດັ່ງກ່າວ.

- **<u>ໝາຍເຫດ:</u>** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

- ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ.
    - ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຢືນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
    - ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

- **ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

- ງວດທີ 1: ຊຳລະ 90% ຂອງມູນຄ່າ ພາຍໃນ 30 ວັນ ລັດຖະການ ຫຼັງຈາກໄດ້ຮັບເຄື່ອງຄົບຖ້ວນຖືກຕ້ອງ ຕິດຕັ້ງສຳເລັດ, ນຳໃຊ້ໄດ້, ຢັ້ງຢືນຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ ແລະ ຄະນະກຳມະການຕິດຕາມກວດກາ;
- ງວດທີ 2: ຊຳລະ 10% ຂອງມູນຄ່າ ພາຍຫລັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 06 ເດືອນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານ ທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້ດ້ວຍ.

**<u>ຜູ້ອຳນວຍການ</u>**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ຄຳພຸດ ສິດທິລາດ

**ສອບຖາມລາຍລະອຽດເພີ່ມເຕີມ**

ຕິດຕໍ່ສອບຖາມ: ທ່ານ ຂັນຕີ ເປີໂທ 020 9811 3597.